# ຄູ່ມືການນໍາໃຊ້ລະຫັດແຫຼ່ງກໍາເ
# ນີດຂອງ CITES

ສະບັບປັບປຸງຄັ້ງທໍາອິດ: ເດືອນກຸມພາ 2017

ຈັດຂຶ້ນພາຍໃຕ້ສັນຍາສຳລັບກອງເລຂາຂອງ CITES ໂດຍ ສະມາຄົມອະນຸລັກທຳມະຊາດສາກົນ (IUCN), ຖະໜົນ Mauverney 28, 1196 Gland, ປະເທດສະວິດເຊີແລນ.

ຂຽນໂດຍ: Jessica A. Lyons, Daniel J. D. Natusch and Robert W. G. Jenkins.

ດ້ວຍການສະໜັບສະໜູນດ້ານການເງິນຂອງ ສະຫະພາບເອີຣົບ.

ການຈັດພິມປຶ້ມຄູ່ມືການນຳໃຊ້ນີ້ຄືນໃໝ່ເພື່ອຈຸດປະສົງທາງດ້ານການສຶກສາ ຫຼື ຈຸດປະສົງທີ່ບໍ່ກ່ຽວຂ້ອງກັບການຄ້າສາມາດຈັດພິມຄືນໃໝ່ໄດ້ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ.

ຫ້າມບໍ່ໃຫ້ມີການຈັດພິມປຶ້ມຄູ່ມືການນຳໃຊ້ນີ້ຄືນໃໝ່ເພື່ອຂາຍຄືນ ຫຼື ຈຸດປະສົງທາງການຄ້າດ້ວຍຮູບແບບໃດກໍຕາມເຊັ່ນວ່າ: ການເກັບຂໍ້ມູນທີ່ເປັນຮູບຖ່າຍ, ເອເລັກໂຕຼນິກ ຫຼື ດ້ວຍລະບົບກົນຈັກ ລວມທັງການອັດເອກະສານ, ການບັນທຶກ, ການອັດສຽງ ຫຼື ການເກັບຂໍ້ມູນ ແລະ ວິທີການກູ້ຂໍ້ມູນ ໂດຍບໍ່ໄດ້ຮັບອະຍາດຈາກເຈົ້າຂອງລິຂະສິດ.

ການກຳນົດລັກສະນະທາງດ້ານພູມສາດທີ່ຈັດເຂົ້າໃນປຶ້ມຄູ່ມືການນຳໃຊ້ສະບັບນີ້ບໍ່ໄດ້ສະແດງເຖິງຄວາມຄິດໃດໜຶ່ງທີ່ສະແດງອອກມາໃນພາກສ່ວນໃດກໍຕາມຂອງຜູ້ຮຽບຮຽງ ຫຼື ກອງເລຂາຂອງ CITES ທີ່ກ່ຽວຂ້ອງກັບສະຖານະພາບທາງກົດໝາຍຂອງປະເທດ, ເຂດນ້ຳແດນດິນ ຫຼື ພື້ນທີ່ ຫຼື ກ່ຽວຂ້ອງກັບການກຳນົດເຂດແດນ ຫຼື ຊາຍແດນຂອງມັນ.

ກອງເລຂາຂອງ CITES

**Maison internationale de l'environnement**

**Chemin des Anémones**

**CH-1219 Châtelaine, Genève**

ປະເທດສະວິດເຊີແລນ

ໂທລະສັບ: **+41(0)22 917 8139/40**

ແຟັກ: **+41(0)22 797 34 17**

ອີເມວ: **info@cites.org**

ເວັບໄຊທ໌: **www.cites.org**

# 1.0 ຄວາມເປັນມາ ແລະ ພາກສະເໜີ

ບົດບາດຂອງສົນທິສັນຍາວ່າດ້ວຍການຄ້າລະຫວ່າງປະເທດກ່ຽວກັບສັດປ່າ ແລະ ພັນໄມ້ທີ່ໃກ້ສູນພັນ (CITES) ແມ່ນເພື່ອຄວບຄຸມການຄ້າລະຫວ່າງປະເທດກ່ຽວກັບພັນສັດ ແລະ ພືດທີ່ໄດ້ຈົດບັນຊີເຂົ້າໃນ CITES ເພື່ອຮັບປະກັນການມີຊີວິດຢູ່ລອດຂອງເຂົາເຈົ້າໃນສະພາບແວດລ້ອມຕາມທຳມະຊາດບໍ່ໃຫ້ໄດ້ຮັບໄພອັນຕະລາຍ. ເພື່ອບັນລຸຈຸດປະສົງດັ່ງກ່າວນີ້, ເປັນສິ່ງສຳຄັນທີ່ລະບົບການຄຸ້ມຄອງໄດ້ນຳໃຊ້ເພື່ອຍົກຕົວຢ່າງການຄ້າລະຫວ່າງປະເທດໄດ້ກຳນົດ ແລະ ເຂົ້າໃຈຢ່າງຈະແຈ້ງ ແລະ ຜົນກະທົບຂອງແຕ່ລະລະບອບການໃນຈຳນວນທັງໝົດຂອງສັດປ່າທີ່ໄດ້ຮັບການປະເມີນຕາມຄວາມເໝາະສົມ. ແຕ່ລະລະບົບຄວນຈະມີລະຫັດແຫຼ່ງກຳເນີດກ່ຽວພັນກັນ ເພື່ອນຳໃຊ້ເຂົ້າໃນໃບອະນຸຍາດ ແລະ ໃບຢັ້ງຢືນຂອງ CITES ເຊິ່ງອອກແຈ້ງການໃຫ້ແຕ່ລະຝ່າຍຊາບກ່ຽວກັບລະບົບການຄຸ້ມຄອງທີ່ນຳໃຊ້ເພື່ອຍົກຕົວຢ່າງໃຫ້ເຫັນ ແລະ ດັ່ງນັ້ນໃຫ້ປະຕິບັດຕາມຂໍ້ກຳນົດຂອງສົນທິສັນຍາທີ່ປະກາດໃຊ້. ຕົວຢ່າງ: ສັດທີ່ເກີດຕາມສະພາບແວດລ້ອມມີລະຫັດແຫຼ່ງກຳເນີດເປັນ "W" ສຳລັບສັດປ່າ. ປະຈຸບັນນີ້ມີ 10 ລະຫັດຂອງແຫຼ່ງຂໍ້ມູນທີ່ຖືກນຳໃຊ້ ເພື່ອສະແດງຄວາມໝາຍຂອງຕົວຢ່າງໃນພັນຂອງສັດ ແລະ ພືດທີ່ໄດ້ຈົດບັນຊີເຂົ້າໃນ CITES ກ່ຽວກັບການຄ້າ (ອະທິບາຍລາຍລະອຽດໃນຂໍ້ 2.0).

ເພື່ອຊ່ວຍເຫຼືອແຕ່ລະຝ່າຍກັບພາລະກິດການປະກາດໃຊ້ລະຫັດແຫຼ່ງກຳເນີດໃຫ້ຖືກຕ້ອງສຳລັບການສົ່ງອອກພັນສັດ ແລະ ພືດຂອງ CITES ໂດຍອີງໃສ່ຂໍ້ຕົກລົງເລກທີ 15.52 ຂອງກອງປະຊຸມຫຼາຍຝ່າຍຄັ້ງທີ 15 ຂອງ CITES (ທີ່ Doha, Qatar ລະຫວ່າງວັນທີ 13 – 15 ເດືອນມີນາ 2010) ໄດ້ຮຽກຮ້ອງໃຫ້ກອງເລຂາຂອງ CITES:

> "... ເຮັດສັນຍາກັບຜູ້ຊ່ຽວຊານທີ່ເຫັນວ່າສົມຄວນເພື່ອກະກຽມຄູ່ມືການນຳໃຊ້ ພ້ອມທັງສະເໜີໃຫ້ແຕ່ລະຝ່າຍນຳໃຊ້ລະຫັດແຫຼ່ງກຳເນີດຕາມຄວາມເໝາະສົມ ... ຕ້ອງໄດ້ສະເໜີໃຫ້ຄະນະກຳມະການຄຸ້ມຄອງສັດ ແລະ ພືດກວດຄືນ ແລະ ສະແດງຄວາມຄິດເຫັນ".

http://www.cites.org/sites/default/files/eng/cop/16/doc/E-CoP16-48.pdf

ກອງເລຂາຂອງ CITES ໄດ້ຮັບການມອບໝາຍໜ້າທີ່ປ່ຽນກັນກັບ IUCN ເພື່ອປະຕິບັດພາລະກິດນີ້. ບົດລາຍງານນີ້ເປັນຜົນໄດ້ຮັບຂອງວຽກ ແລະ ມີຈຸດປະສົງຊີ້ນຳແນວທາງໃຫ້ແຕ່ລະຝ່າຍຂອງ CITES ໃນການນຳໃຊ້ລະຫັດແຫຼ່ງກຳເນີດຂອງພັນສັດ ແລະ ພືດຕາມຄວາມເໝາະສົມເພື່ອປ້ອນຂໍ້ມູນເຂົ້າໃນການຄ້າລະຫວ່າງປະເທດ.

# 2.0 ລະຫັດແຫຼ່ງກຳເນີດທີ່ນຳໃຊ້ໃນປະຈຸບັນ ແລະ ບັນດາລະບົບການຜະລິດ

ນິຍາມຂອງລະຫັດແຫຼ່ງກຳເນີດທີ່ຖືກນຳໃຊ້ໃນທີ່ນີ້ແມ່ນໄດ້ມາຈາກມະຕິຂອງກອງປະຊຸມເລກທີ 12.3 (ສະບັບປັບປຸງສຳເນົາເລກທີ 17) ແລະ ເວັບໄຊທ໌ ຂອງ CITES. ສຳລັບຄຳອະທິບາຍເພີ່ມເຕີມໃຫ້ເບິ່ງການປະມວນຄຳສັບຂອງ CITES ດັ່ງຕໍ່ໄປນີ້: http://www.cites.org/eng/resources/terms/glossary.php

| ລະຫັດແຫຼ່ງກຳເນີດ | ຄຳອະທິບາຍ | ເອກະສານຊ້ອນທ້າຍຂອງ CITES | ນິຍາມ |
|---|---|---|---|
| W | ສັດປ່າ | I, II, III | ໝາຍເຖິງກຸ່ມຕົວຢ່າງທີ່ໄດ້ມາຈາກສະພາບແວດລ້ອມຕາມທຳມະຊາດ. |
| X | ສັດທະເລ | I, II, III | ໝາຍເຖິງກຸ່ມຕົວຢ່າງທີ່ໄດ້ມາຈາກສະພາບແວດລ້ອມຕາມທະເລໂດຍບໍ່ຢູ່ພາຍໃຕ້ຂອບເຂດອຳນາດຂອງລັດໃດໜຶ່ງ. |

| | | | |
|---|---|---|---|
| R | ສັດລ້ຽງ | I, II, III | ໝາຍເຖິງກຸ່ມຕົວຢ່າງຂອງສັດຊະນິດນີ້ໄດ້ຖືກລ້ຽງໃນສະພາບແວດລ້ອມທີ່ມີການຄວບຄຸມ ເຖິ່ງຖືໄຂ່ ແລະ ລູກອ່ອນຢູ່ໃນປ່າ ເຊິ່ງເປັນບ່ອນທີ່ພວກເຂົາອາດຈະມີໂອກາດລອດຊີວິດເປັນສັດໃຫຍ່ໄດ້ໜ້ອຍຫຼາຍ. |
| D | ສັດລ້ຽງທີ່ຖືກກັກຂັງ ຫຼື ພືດຂະຫຍາຍພັນທຽມ | I | ເອກະສານຊ້ອນທ້າຍ I, ໝາຍເຖິງສັດລ້ຽງທີ່ຖືກກັງຂັງສຳລັບຈຸດປະສົງການດຳເນີນງານທາງການຄ້າ ເຊິ່ງໄດ້ກຳນົດໄວ້ໃນການຈົດທະບຽນຂອງກອງເລຂາເພື່ອໃຫ້ສອດຄ່ອງກັບມະຕິຂອງກອງປະຊຸມເລກທີ 12.10 (ສະບັບປັບປຸງສຳເນົາເລກທີ 15) ແລະ ເອກະສານຊ້ອນທ້າຍ I, ພືດທີ່ຂະຫຍາຍພັນທຽມເພື່ອຈຸດປະສົງທາງການຄ້າ ລວມທັງຊິ້ນສ່ວນຕ່າງ ແລະ ອະນຸພັນຕ່າງໆທີ່ສົ່ງອອກພາຍໃຕ້ຂໍ້ກຳນົດ, ມາດຕາ VII, ວັກທີ 4 ຂອງສົນທິສັນຍາ. |
| A | ພືດຂະຫຍາຍພັນທຽມ | I, II, III | ໝາຍເຖິງພືດທີ່ຂະຫຍາຍພັນທຽມຕາມມະຕິຂອງກອງປະຊຸມເລກທີ 11.11 (ສະບັບປັບປຸງສຳເນົາເລກທີ 17) ລວມທັງຊິ້ນສ່ວນ ແລະ ອະນຸພັນຕ່າງໆທີ່ສົ່ງອອກພາຍໃຕ້ຂໍ້ກຳນົດ, ມາດຕາ VII, ວັກທີ 5 ((ກຸ່ມຕົວຢ່າງຂອງພັນສັດ ແລະ ພືດທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ I, ເຊິ່ງໄດ້ມີການຂະຫຍາຍພັນທຽມທີ່ບໍ່ແມ່ນຈຸດປະສົງດ້ານການຄ້າ ແລະ ກຸ່ມຕົວຢ່າງຂອງພັນສັດ ແລະ ພືດທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ I ແລະ II. |
| C | ສັດລ້ຽງທີ່ຖືກກັກຂັງ | I, II, III | ໝາຍເຖິງສັດລ້ຽງທີ່ຖືກກັກຂັງຕາມມະຕິຂອງກອງປະຊຸມເລກທີ 10.16 (ສະບັບປັບປຸງ) ລວມທັງຊິ້ນສ່ວນ ແລະ ອະນຸພັນຕ່າງໆທີ່ຖືກສົ່ງອອກພາຍໃຕ້ຂໍ້ກຳນົດ, ມາດຕາ VII, ວັກທີ 5. |
| F | ສັດລ້ຽງທີ່ເກີດມາແລ້ວຖືກກັກຂັງ | I, II, III | ໝາຍເຖິງບັນດາສັດທີ່ເກີດມາແລ້ວຖືກກັກຂັງ (F1 ຫຼື ລຸ້ນຖັດໄປ) ທີ່ບໍ່ສະແດງນິຍາມເປັນ "ສັດທີ່ເກີດມາແລ້ວຖືກກັກຂັງ" ໃນມະຕິຂອງກອງປະຊຸມເລກທີ 10.16 (ສະບັບປັບປຸງ) ລວມທັງຊິ້ນສ່ວນ ແລະ ອະນຸພັນຕ່າງໆ. |
| U | ສັດບໍ່ມີຊື່ | I, II, III | ໝາຍເຖງແຫຼ່ງກຳເນີດຂອງພັນສັດ ແລະ ພືດທີ່ບໍ່ມີຊື່ ແຕ່ຕ້ອງໄດ້ມີການພິສູດ. |
| I | ສັດທີ່ຖືກຍຶດ ຫຼື ຄອບຄອງ | I, II, III | ໝາຍເຖິງສັດ ແລະ ພືດທີ່ຖືກຍຶດ ຫຼື ຄອບຄອງ, ລະຫັດແຫຼ່ງກຳເນີດປະເພດນີ້ ຕ້ອງຖືກນຳໃຊ້ໃຫ້ແທດເໝາະກັບລະຫັດແຫຼ່ງກຳເນີດອື່ນ. |
| O | ກ່ອນສົນທິສັນຍາ | I, II, III | ໝາຍເຖິງສັດ ແລະ ພືດທີ່ໄດ້ລວບລວມມາກ່ອນຂໍ້ກຳນົດຂອງສົນທິສັນຍາຈະປະກາດໃຊ້. ຖ້າຫາກວ່າຄະນະກຳມະການຄຸ້ມຄອງອອກໃບຢັ້ງຢືນໃຫ້, ແລ້ວຈະບໍ່ຈຳເປັນຕ້ອງມີໃບອະນຸຍາດ ຫຼື ໃບຢັ້ງຢືນອີກພາຍໃຕ້ສົນທິສັນຍາດັ່ງກ່າວ (ເພື່ອອະນຸຍາດໃຫ້ສົ່ງອອກ, ນຳເຂົ້າ ຫຼື ສົ່ງອອກຄືນ). |

# 3.0 ຈຸດສຳຄັນທີ່ແຕກຕ່າງຂອງລະຫັດແຫຼ່ງກຳເນີດ

ຈຸດສຳຄັນທີ່ແຕກຕ່າງຂອງລະຫັດແຫຼ່ງກຳເນີດໄດ້ມີການປັບປຸງເພື່ອຊ່ວຍເຫຼືອແຕ່ລະຝ່າຍໃນການນຳໃຊ້ລະຫັດແຫຼ່ງກຳເນີດໃຫ້ຖືກຕ້ອງສຳລັບການສົ່ງອອກສັດ ແລະ ພືດທີ່ໄດ້ຈົດເຂົ້າບັນຊີຂອງ CITES. ຄຳແນະນຳວິທີການນຳໃຊ້ຈຸດສຳຄັນມີດັ່ງຕໍ່ໄປນີ້:

1. ສຳລັບການຄ້າລະຫວ່າງປະເທດທັງພືດ ແລະ ສັດ ລວມທັງຊິ້ນສ່ວນ ແລະ ອະນຸພັນຂອງພວກມັນ, ໃຫ້ເລີ່ມຕົ້ນດ້ວຍຕົວ "**x**" ເຂັ້ມຂ້າງລຸ່ມໃນໜ້ານີ້.
2. ສຳລັບຄຳຖາມໃຫ້ປະຕິບັດຕາມລູກສອນ "ເຈົ້າ" ຫຼື "ບໍ່" ໄປຫາຫ້ອງຄຳຖາມຖັດໄປຈົນກວ່າສຳເລັດດ້ວຍຫ້ອງທີ່ເປັນສີ. ຫ້ອງສີເຫຼົ່ານີ້ບົ່ງບອກເຖິງລະຫັດແຫຼ່ງກຳເນີດຂອງ CITES ທີ່ຄວນຈະຖືກນຳໃຊ້ເມື່ອມີການອອກໃບອະນຸຍາດ ຫຼື ໃບຢັ້ງຢືນສຳລັບກຸ່ມຕົວຢ່າງໃດໜຶ່ງ.
3. ບາງຫ້ອງຈະມີລັກສະນະຄ້າຍຄືກັບເຄື່ອງໝາຍດອກຈັນ * ທີ່ບອກທາງໃຫ້ຜູ້ໃຊ້ເພື່ອເບິ່ງຄຳແນະນຳເພີ່ມເຕີມ (ເບິ່ງໃນຂໍ້ 4.0 ຫາ 7.0) ເພື່ອກຳນົດລະຫັດແຫຼ່ງກຳເນີດ.
4. ຖ້າຫາກຍັງບໍ່ໝັ້ນໃຈວ່າລະຫັດແຫຼ່ງກຳເນີດອັນໃດຄວນຈະຖືກນຳໃຊ້ສຳລັບ ກຸ່ມຕົວຢ່າງຈຳເພາະໃດໜຶ່ງ, ໃຫ້ປຶກສານຳກອງເລຂາຂອງ CITES.
5. ນອກຈາກນັ້ນກໍໃຫ້ສັງເກດເບິ່ງຕື່ມເພາະຍັງມີຫຼາຍຂໍ້ຍົກເວັ້ນ ແລະ ຂໍ້ກຳນົດພິເສດທີ່ນຳໃຊ້ເຂົ້າໃນກຸ່ມຕົວຢ່າງທີ່ໄດ້ຈົດບັນຊີເຂົ້າໃນ CITES - **ການເຊື່ອມຕໍ່ຫາຂໍ້ຍົກເວັ້ນ ແລະ ຂໍ້ກຳນົດພິເສດໄດ້ກຳນົດໄວ້ໃນຂໍ້ 7.0 ຂອງຄຳແນະນຳນີ້.**
6. ຂໍ້ມູນອັນດຽວກັນໃນສະແດງໃຫ້ເຫັນໃນຮູບແບບຄຳຖາມຢູ່ເອກະສານຊ້ອນທ້າຍຂອງຄູ່ມືການນຳໃຊ້ນີ້ (ເບິ່ງໜ້າທີ 12 "ແຜນວາດໃນຮູບແບບສອບຖາມ").




ເລີ່ມຕົ້ນທີ່ “x” ເຂັ້ມທາງເບື້ອງຊ້າຍມືທາງເທິງແລ້ວຕາມໜ້າເຈ້ຍນີ້.
ກຸ່ມຕົວຢ່າງເປັນພືດ ຫຼື ສັດ?
ພືດ
ສັດ
ກຸ່ມຕົວຢ່າງນີ້ໄດ້ມາຈາກສະພາບແວດລ້ອມຕາມທຳມະຊາດບໍ່?
ເຈົ້າ
ບໍ່
ກຸ່ມຕົວຢ່າງນີ້ໄດ້ມາຈາກສະພາບແວດລ້ອມຕາມທຳມະຊາດບໍ່ ເຊັ່ນວ່າ: ໄຂ່ ຫຼື ລູກອ່ອນທີ່ມີໂອກາດມີຊີວິດຢູ່ລອດເປັນຜູ້ໃຫຍ່ໄດ້ໜ້ອຍ?
ກຸ່ມຕົວຢ່າງນີ້ໄດ້ຖືກລ້ຽງໃນສະພາບແວດລ້ອມທີ່ມີການຄວບຄຸມບໍ່?
ກຸ່ມຕົວຢ່າງໄດ້ຖືກໂອນເຂົ້າໃນເອກະສານຊ້ອນທ້າຍ ແລະ ສອດຄ່ອງກັບມະຕິຂອງກອງປະຊຸມເລກທີ 11.16 (ສະບັບປັບປຸງສຳເນົາເອກະສານເລກທີ 15)?
ກຸ່ມຕົວຢ່າງໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ II ຫຼື III ຂອງ CITES ບໍ່?
ກຸ່ມຕົວຢ່າງສອດຄ່ອງກັບຂໍ້ກຳນົດຕ່າງໆໃນມາດຕາ III ຂອງສົນທິສັນຍາບໍ່?
ລະຫັດແຫຼ່ງກຳເນີດ R – ກຸ່ມຕົວຢ່າງທີ່ລ້ຽງໃນທົ່ງ
ບໍ່ຄວນດຳເນີນການສົ່ງອອກ
ລະຫັດແຫຼ່ງກຳເນີດ W – ກຸ່ມຕົວຢ່າງສະພາບແວດລ້ອມຕາມທຳມະຊາດ
ກຸ່ມຕົວຢ່າງທີ່ໄດ້ມາຈາກເພດຜູ້ ແລະ ແມ່ປະສົມພັນກັນ ຫຼື ຖ່າຍໂອນຈຸລັງສືບພັນໃນສະພາບແວດລ້ອມທີ່ມີການຄວບຄຸມ (ການສືບພັນແບບຮ່ວມເພດ) ຫຼື ເພດຜູ້ ແລະ ແມ່ໃນສະພາບແວດລ້ອມທີ່ມີການຄວບຄຸມໃນເວລາທີ່ການຈະເລີນພັນເລີ່ມເກີດຂຶ້ນ(ການສືບພັນແບບບໍ່ຮ່ວມເພດ) ບໍ່?
ກຸ່ມຕົວຢ່າງໄດ້ເກີດມາແບບກັກຂັງບໍ່ ຫຼື ໃນສະພາບແວດລ້ອມທີ່ມີການຄວບຄຸມ?
ເຈົ້າ - ກຸ່ມຕົວຢ່າງທີ່ລ້ຽງມາແບບກັກຂັງ
ຕົວຢ່າງຂອງ CITES ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບໃດ?
ເອກະສານຊ້ອນທ້າຍ I
ເອກະສານຊ້ອນທ້າຍ II ຫຼື III
ລະຫັດແຫຼ່ງກຳເນີດ F – ກຸ່ມຕົວຢ່າງທີ່ເກີດຂຶ້ນມາແບບກັກຂັງ
ການດຳເນີນການປະສົມພັນລຸ້ນທີ່ສອງ (F2) ຫຼື ລຸ້ນຖັດໄປ (F3, F4 ແລະ ອື່ນໆ) ໃນສະພາບແວດລ້ອມທີ່ມີການຄວບຄຸມ ຫຼື ໄດ້ຮັບການຄຸ້ມຄອງໃນລັກສະນະທີ່ວ່າໄດ້ສາທິດໃຫ້ເຫັນເຖິງຄວາມສາມາດຂອງການຂະຫຍາຍພັນຂອງລຸ້ນທີສອງໄດ້ຢ່າງໜ້າເຊື່ອຖືໃນສະພາບແວດລ້ອມທີ່ມີການຄວບຄຸມບໍ່?
ກຸ່ມຕົວຢ່າງໄດ້ຖືກລ້ຽງມາເພື່ອຈຸດປະສົງທາງການຄ້າບໍ່?
ລະຫັດແຫຼ່ງກຳເນີດ C – ກຸ່ມຕົວຢ່າງທີ່ລ້ຽງແບບກັກຂັງ
ກຸ່ມຕົວຢ່າງຖືກລ້ຽງຢູ່ໃນການດຳເນີນການປະສົມພັນທີ່ໄດ້ຈົດທະບຽນຂອງ CITES ບໍ່?
ສັດລ້ຽງທີ່ມີການປະສົມພັນໄດ້ຖືກກຳນົດຕາມຂໍ້ກຳນົດຂອງ CITES ແລະ ລະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ໃນລັກສະນະທີ່ບໍ່ເປັນອັນຕະລາຍຕໍ່ການມີຊີວິດຢູ່ລອດຂອງສັດ ແລະ ພືດຈາກສະພາບແວດລ້ອມຕາມທຳມະຊາດບໍ່?
ສັດລ້ຽງທີ່ມີການປະສົມພັນໄດ້ຖືກເກັບຮັກສາໂດຍບໍ່ມີຄຳແນະນຳຂອງກຸ່ມຕົວຢ່າງເລີຍຈາກສະພາບແວດລ້ອມຕາມທຳມະຊາດບໍ່, ຍົກເວັ້ນການເພີ່ມສັດ, ໄຂ່ ຫຼື ຈຸລັງສືບພັນເຂົ້າມາບາງໂອກາດ ຕາມຂໍ້ກຳນົດຂອງ CITES ແລະ ລະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ໃນລັກສະນະທີ່ບໍ່ທຳລາຍການມີຊີວິດຢູ່ລອດຂອງສັດ ແລະ ພືດໃນສະພາບແວດລ້ອມຕາມທຳມະຊາດ?
ລະຫັດແຫຼ່ງກຳເນີດ D – ກຸ່ມຕົວຢ່າງທີ່ລ້ຽງແບບກັກຂັງ.
ບໍ່ຄວນດຳເນີນການສົ່ງອອກ




ຫ້ອງທີ 1. ຂໍ້ຍົກເວັ້ນສໍາລັບພືດທີ່ປູກຈາກເມັດພັນ ແລະ ຈຸລັງສືບພັນ

[ມະຕິຂອງກອງປະຊຸມເລກທີ 11.11 [ສະບັບປັບປຸງສໍາເນົາເລກທີ 17]]

ອາດຈະຕ້ອງມີຂໍ້ຍົກເວັ້ນ ແລະ ກຸ່ມຕົວຢ່າງທີ່ຖືວ່າເປັນການຂະຫຍາຍພັນທຽມຈະເລີນເຕີບໂຕມາຈາກເມັດພັນ ຫຼື ຈຸລັງສືບພັນທີ່ເກັບຕາມທໍາມະຊາດເທົ່ານັ້ນ ໃນກໍລະນີການຈໍາແນກປະເພດກ່ຽວພັນກັບ:

a) i) ການກໍານົດເອົາແນວພັນຜູ້ ແລະ ແມ່ສະແດງໃຫ້ເຫັນເຖິງບັນຫາທີ່ຫຍຸ້ງຍາກອັນສໍາຄັນໃນການປະຕິບັດຍ້ອນວ່າກຸ່ມຕົວຢ່າງນັ້ນໃຊ້ເວລາດົນເພື່ອເຖິງອາຍຸສືບພັນທີ່ເຫັນໃນພືດຫຼາຍຊະນິດ.

ii) ເມັດພັນ ຫຼື ຈຸລັງສືບພັນທີ່ໄດ້ເກັບມາຕາມທໍາມະຊາດ ແລະ ຈະເລີນເຕີບໂຕໃນສະພາບແວດລ້ອມທີ່ມີການຄວບຄຸມພາຍໃຕ້ລັດໃດໜຶ່ງ ເຊິ່ງຈະຕ້ອງເປັນປະເທດຕົ້ນກໍາເນີດຂອງເມັດພັນ ແລະ ຈຸລັງສືບພັນນັ້ນອີກ.

iii) ຄະນະກໍາມະການຄຸ້ມຄອງທີ່ກ່ຽວຂ້ອງຂອງລັດໄດ້ກໍານົດໄວ້ວ່າການເກັບເມັດພັນ ຫຼື ຈຸລັງສືບພັນນັ້ນແມ່ນຜິດກົດໝາຍ ແລະ ຕ້ອງໃຫ້ສອດຄ່ອງກັບລະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງເພື່ອປົກປ້ອງ ແລະ ອະນຸລັກສັດ ແລະ ພືດເຫຼົ່ານັ້ນ.

iv) ອົງການວິທະຍາສາດຂອງລັດທີ່ກ່ຽວຂ້ອງນັ້ນໄດ້ກໍານົດໄວ້ວ່າ:

- A. ການເກັບເມັດພັນ ແລະ ຈຸລັງສືບພັນນັ້ນບໍ່ໃຫ້ເປັນອັນຕະລາຍຕໍ່ການມີຊີວິດຢູ່ລອດຂອງສັດ ແລະ ພືດທີ່ມີຢູ່ໃນສະພາບແວດລ້ອມຕາມທໍາມະຊາດ ແລະ
- B. ການອະນຸມັດການຄ້າໃນກຸ່ມຕົວຢ່າງດັ່ງກ່າວແມ່ນມີຜົນດີຕໍ່ການອະນຸລັກຝູງສັດທີ່ຢູ່ໃນສະພາບແວດລ້ອມຕາມທໍາມະຊາດນັ້ນ.

b) ໃນລະດັບທີ່ຕໍ່າສຸດ, ໃຫ້ປະຕິບັດຕາມວັກນ້ອຍໆໃນຂໍ້ a) iv) A. ແລະ B. ທີ່ກ່າວມາຂ້າງເທິງນັ້ນມີດັ່ງນີ້:

i) ການເກັບເມັດພັນ ຫຼື ຈຸລັງສືບພັນສໍາລັບຈຸດປະສົງແມ່ນມີຂອບເຂດຈໍາກັດໃນລັກລັກສະນະດັ່ງກ່າວ ເພື່ອໃຫ້ມີການສືບພັນຂອງຝູງສັດໃນສະພາບແວດລ້ອມຕາມທໍາມະຊາດຄືນໃໝ່.

ii) ອັດຕາສ່ວນຂອງພືດທີ່ຈະເລີນເຕີບໂຕພາຍໃຕ້ສະພາບການດັ່ງກ່າວນັ້ນໄດ້ຖືກນໍາໃຊ້ ເພື່ອສ້າງສວນຮັບຮອງພັນພືດໂຕຜູ້ ແລະ ແມ່ໃນອະນາຄົດ ແລະ ການເປັນແຫຼ່ງກໍາເນີດຂອງເມັດພັນ ຫຼື ຈຸລັງສືບພັນເພີ່ມ ແລະ ນັ້ນກໍເພື່ອຫຼຸດຜ່ອນ ຫຼື ຕັດຄວາມຈໍາເປັນເພື່ອເກັບເມັດພັນ ຫຼື ຈຸລັງສືບພັນຈາກສະພາບແວດລ້ອມຕາມທໍາມະຊາດອອກຕື່ມ ແລະ

iii) ອັດຕາສ່ວນຂອງພືດທີ່ຈະເລີນເຕີບໂຕພາຍໃຕ້ສະພາບການດັ່ງກ່າວນີ້ ເພື່ອນໍາໃຊ້ສໍາລັບການປູກຄືນໃນສະພາບແວດລ້ອມຕາມທໍາມະຊາດ ເພື່ອເສີມຂະຫຍາຍການຟື້ນຟູຈໍານວນທັງໝົດທີ່ມີຢູ່ ຫຼື ເພື່ອກໍານົດຈໍານວນທັງໝົດຄືນໃໝ່ທີ່ຖືກທໍາລາຍ ແລະ

c) ໃນກໍລະນີຂອງການດໍາເນີນການຂະຫຍາຍພັນຕາມເອກະສານຊ້ອນທ້າຍ I, ສັດ ແລະ ພືດເພື່ອຈຸດປະສົງທາງການຄ້າພາຍໃຕ້ເງື່ອນໄຂດັ່ງກ່າວທີ່ພວກເຂົາໄດ້ຈົດທະບຽນກັບກອງເລຂາຂອງຕາມມະຕິຂອງກອງປະຊຸມເລກທີ 9.19 (ສະບັບປັບປຸງສໍາເນົາເລກທີ 15) ວ່າດ້ວຍຄໍາແນະນໍາການຈົດທະບຽນຂອງເບ້ຍໄມ້ທີ່ສົ່ງອອກກຸ່ມຕົວຢ່າງຂະຫຍາຍພັນທຽມຂອງສັດ ແລະ ພືດໃນເອກະສານຊ້ອນທ້າຍ I.

* ພືດທີ່ຕໍ່ກິ່ງມາໄດ້ຖືກຮັບຮອງເປັນພຽງຂະຫຍາຍພັນທຽງເທົ່ານັ້ນໃນເວລາທີຮາກ ແລະ ກິ່ງຂອງມັນແມ່ນໄດ້ມາຈາກກຸ່ມຕົວຢ່າງທີ່ໄດ້ຂະຫຍາຍພັນທຽມ.

# 4.0 ຄໍາແນະນໍາເພີ່ມເຕີມກ່ຽວກັບການນໍາໃຊ້ລະຫັດແຫຼ່ງກໍາເນີດ R

CITES ກໍານົດເອົາຄໍາວ່າ “ການລ້ຽງສັດໃນທົ່ງ” ໝາຍເຖິງການລ້ຽງໃນສະພາບແວດລ້ອມທີ່ມີການຄວບຄຸມສັດ ເຊິ່ງຖືໄຂ່ ແລະ ລູກອ່ອນຢູ່ໃນສະພາບແວດລ້ອມຕາມທໍາມະຊາດ ເຊິ່ງເປັນບ່ອນທີ່ພວກເຂົາອາດຈະມີໂອກາດລອດຊີວິດເປັນສັດໃຫຍ່ໄດ້ໜ້ອຍຫຼາຍ. ເຖິງຢ່າງໃດກໍຕາມໄດ້ມີການປັບປຸງເພື່ອໃຫ້ມີຄວາມຊັດເຈນຍິ່ງຂຶ້ນ [ມະຕິຂອງກອງປະຊຸມເລກທີ 11.16 (ສະບັບປັບປຸງເສົາເນົາເລກທີ 15)]. ຄວາມໝາຍຂອງການລ້ຽງສັດໃນທົ່ງຍັງມີຫຼາຍຄໍາທີ່ມີຫຼາຍກວ່າຄວາມໝາຍໜຶ່ງທີ່ມີຄວາມໝາຍເປີດໃຫ້ແກ່ການຕີຄວາມໝາຍ ແລະ ການອອກແຈ້ງການແຫຼ່ງກໍາເນີດບໍ່ຖືກຕ້ອງຖ້າຫາກວ່າບໍ່ໄດ້ກໍານົດລະອຽດ. ຂໍ້ນີ້ໄດ້ອະທິບາຍຂໍ້ມູນເພີ່ມເຕີມເພື່ອຊ່ວຍໃຫ້ແຕ່ລະຝ່າຍນໍາໃຊ້ລະຫັດແຫຼ່ງກໍາເນີດຂອງ “R” ໃຫ້ມີຄວາມຖືກຕ້ອງ.

**“ໂອກາດລອດຊີວິດເປັນສັດໃຫຍ່ໄດ້ໜ້ອຍຫຼາຍ” ປະກອບມີຫຍັງແດ່?**

ໂອກາດລອດຊີວິດເປັນສັດໃຫຍ່ເປັນສິ່ງທີ່ຕ້ອງໄດ້ຄົ້ນຄວ້າພິຈາລະນາພື້ນຖານທີ່ສຸດເມື່ອມີການກໍານົດກຸ່ມຕົວຢ່າງຂອງສັດ ແລະ ພືດທີ່ສາມາດລ້ຽງໃນທົ່ງໄດ້ (ອີງຕາມນິຍາມປະຈຸບັນກໍານົດໂດຍແຕ່ລະຝ່າຍໃຫ້ກັບ CITES). ໂອກາດລອດຊີວິດເປັນສັດໃຫຍ່ກ່ຽວຂ້ອງກັບຍຸດທະສາດປະຫວັດຊີວິດຂອງສັດ ແລະ ພືດ. ສັດ ແລະ ພືດບາງຈໍາພວກໄດ້ຖືກຄັດເລືອກເປັນແຫຼ່ງກໍາເນີດ R ເຊັ່ນວ່າ: ພວກມັນມີລູກເປັນຈໍານວນຫຼວງຫຼາຍ ເຊິ່ງແຕ່ລະໂຕມີໂອກາດລອດຊີວິດເປັນສັດໃຫຍ່ຫຼາຍ. ຕົວຢ່າງ: ເຕົ່າທະເລ, ແຂ້, ປາຊະນິດກ້າງຫຼາຍ ແລະ ສັດບໍ່ມີກະດູກສັນຫຼັງສ່ວນຫຼາຍໄດ້ຖືກຄັດເລືອກເປັນແຫຼ່ງກໍາເນີດ R ແລະ ວາງໄຂ່ເປັນຈໍານວນຫຼາຍ, ມີພຽງອັດຕາສ່ວນໜ້ອຍດຽວເທົ່ານັ້ນທີ່ຈະມີໂອກາດລອດຊີວິດເປັນສັດໃຫຍ່ໄດ້. ໃນອີກແງ່ໜຶ່ງ, ສັດຈໍາພວກທີ່ມີລູກອ່ອນເປັນຈໍານວນຫຼວງຫຼາຍເຊັ່ນວ່າ: ຊ້າງ ແລະ ແມວໃຫຍ່ໄດ້ຖືກຄັດເລືອກເປັນແຫຼ່ງກໍາເນີດ K ແລະ ເມື່ອປຽບທຽບແລ້ວສັດຈໍາພວກນີ້ມີໂອກາດທີ່ຈະລອດຊີວິດເປັນສັດໃຫຍ່ໄດ້ສູງຫຼາຍ. ເພາະສະນັ້ນ, ການຍ້າຍລູກອ່ອນຂອງສັດທີ່ຖືກຄັດເລືອກເປັນແຫຼ່ງກໍາເນີດ K ອອກຈາກສັດປ່າໃນສະພາບແວດລ້ອມຕາມທໍາມະຊາດເພື່ອມາລ້ຽງໃນທົ່ງມີໂອກາດໄດ້ຮັບຜົນກະທົບອັນຍິ່ງໃຫຍ່ຕໍ່ສັດປ່າຫຼາຍກວ່າການຍ້າຍສັດທີ່ຖືກຄັດເລືອກເປັນແຫຼ່ງກໍາເນີດ R. ດັ່ງນັ້ນ, ລະບົບການສືບພັນຂອງສັດລ້ຽງໃນທົ່ງຈຶ່ງມີຄວາມເໝາະສົມສະເພາະໄຂ່ ແລະ ລູກອ່ອນເທົ່ານັ້ນຂອງສັດເທົ່ານັ້ນ ເຊິ່ງເປັນບ່ອນທີ່ສັດປະເພດນີ້ຕາຍເປັນຈໍານວນຫຼວງຫຼາຍຈາກໄພພິບັດທາງທໍາມະຊາດ (ຕົວຢ່າງ: ສັດທີ່ກິນສັດອື່ນເປັນອາຫານ, ເປັນພະຍາດ, ສະພາບແວດລ້ອມ ແລະ ອື່ນໆ).

**“ການລ້ຽງສັດໃນສະພາບແວດລ້ອມທີ່ມີການຄວບຄຸມ” ປະກອບມີຫຍັງແດ່?**

ສໍາລັບຈຸດປະສົງຂອງການນໍາໃຊ້ລະຫັດແຫຼ່ງກໍາເນີດ R ໃຫ້ຖືກຕ້ອງ, ຄໍາວ່າ “ການລ້ຽງ” ຄວນຈະກ່ຽວຂ້ອງກັບລະດັບການຂະຫຍາຍຕົວ ແລະ/ຫຼື ການປັບປຸງກຸ່ມຕົວຢ່າງດໍາເນີນໄປ ແຕ່ຕ້ອງຢູ່ພາຍໃຕ້ການຄຸ້ມຄອງແບບກັກຂັງ ແລະ ໂດຍບໍ່ຈໍາເປັນຕໍ່ໄລຍະເວລາທີ່ໃຊ້ໃນການກັກຂັງ. ຄວາມແຕກຕ່າງນີ້ມີຄວາມສໍາຄັນເນື່ອງຈາກຄວາມຫຼາກຫຼາຍຂອງປະຫວັດຊີວິດໃນລະຫວ່າງການຈໍາແນກຊື່. ຕົວຢ່າງ: ສັດບໍ່ມີກະດູກສັນຫຼັງບາງຈໍາພວກອາດຈະໄດ້ພິຈາລະນາຄົ້ນຄວ້າໃຫ້ລ້ຽງໃນທົ່ງພາຍຫຼັງສອງອາທິດເທົ່ານັ້ນໃນສະພາບແວດລ້ອມທີ່ມີການຄວບຄຸມ ຍ້ອນອັດຕາການຈະເລີນເຕີບໂຕຂອງພວກມັນເພີ່ມຂຶ້ນຢ່າງໄວວາ. ເບິ່ງໄປໃນແງ່ກົງກັນຂ້າມ, ສັດເລືອຄານບາງຈໍາພວກ (ເຊັ່ນວ່າ: ເຕົ່າຊະນິດທີ່ຈະເລີນໄວຊ້າ) ອາດຈະມີຄວາມຕ້ອງການໄລຍະເວລາດົນກວ່າພາຍໃຕ້ການຄຸ້ມຄອງແບບກັກຂັງກ່ອນທີ່ພວກມັນຈະສາມາດໄດ້ຮັບການຄົ້ນຄວ້າພິຈາລະນາເປັນສັດລ້ຽງໃນທົ່ງ. ເມື່ອມີການກໍານົດວ່າການລ້ຽງໃນສະພາບແວດລ້ອມທີ່ມີການຄວບຄຸມປະກອບມີຫຍັງແດ່, ຄະນະກໍາມະການຄຸ້ມຄອງໃນປຶກສາຫາລືກັບອົງການວິທະຍາສາດຄວນຈະກໍານົດວ່າ:

1) The ສະຖານທີ່ລ້ຽງສັດໃນທົ່ງໃຫ້ເງື່ອນໄຂທີ່ຈໍາເປັນໄດ້ຢ່າງຕັ້ງໜ້າສໍາລັບການຈະເລີນເຕີບໂຕ ແລະ

ການຢູ່ດີກິນດີຂອງກຸ່ມຕົວຢ່າງ (ເຊັ່ນວ່າ: ມີບ່ອນພັກອາໄສພຽງພໍ, ມີອາຫານ, ມີການປິ່ນປົວດ້ານສັດຕະວະແພດ ແລະ ອື່ນໆ) ຫຼື

2) ພຽງແຕ່ຖືກຸ່ມຕົວຢ່າງຂອງສັດ ແລະ ພືດທີ່ຢູ່ໃນລະຫວ່າງທີ່ສົ່ງອອກ.

ຖ້າຫາກວ່າຄະນະກຳມະການຄຸ້ມຄອງຄົ້ນຄວ້າພິຈາລະນາວ່າສະຖານທີ່ເຫຼົ່ານັ້ນໃຫ້ເງື່ອນໄຂທີ່ຈຳເປັນສຳລັບການຈະເລີນເຕີບໂຕ ແລະ ການຈະເລີນພັນ ແລ້ວກຸ່ມຕົວຢ່າງເຫຼົ່ານັ້ນທີ່ໄດ້ມາຈາກສະຖານທີ່ດັ່ງກ່າວກໍເໝາະສົມທີ່ຈະນຳໃຊ້ລ້ຽງລັດໃນທົ່ງ. ເຖິງຢ່າງໃດກໍຕາມ, ຖ້າບໍ່ມີສະຖານທີ່ດັ່ງກ່າວໃຫ້ ແລ້ວກຸ່ມຕົວຢ່າງຂອງສັດ ແລະ ພືດເຫຼົ່ານັ້ນກໍຈະຢູ່ໃນສະພາບແວດລ້ອມຕາມທຳມະຊາດ ແຕ່ຄວນຈະໄດ້ສັງເກດເບິ່ງວ່າ: "ການລ້ຽງໃນສະພາບແວດລ້ອມທີ່ມີການຄວບຄຸມນັ້ນ" ບໍ່ໄດ້ໝາຍຄວາມວ່າສັດແຕ່ລະໂຕຈະຕ້ອງໄດ້ຮັບການຄຸ້ມຄອງແບບກັກຂັງຈົນໃຫຍ່ ເພື່ອໃຫ້ສອດຄ່ອງກັບນິຍາມຂອງ "ລ້ຽງສັດໃນທົ່ງ".

**ການທຳຄວາມເຂົ້າໃຈຕະຫຼາດ**

ຂໍ້ມູນທີ່ສຳຄັນອີກອັນໜຶ່ງເພື່ອເປັນແນວທາງນຳໃຊ້ແຫຼ່ງກຳເນີດ "R" ຂອງ CITES ແມ່ນເພື່ອທຳຄວາມເຂົ້າໃຈລັກສະນະ ແລະ ຈຸດພິເສດຂອງຕະຫຼາດທີ່ກຸ່ມຕົວຢ່າງຂອງສັດ ແລະ ພືດເຫຼົ່ານັ້ນຖືກຜະລິດມາເພື່ອສະໜອງຕະຫຼາດ. ຕົວຢ່າງ: ກຸ່ມຕົວຢ່າງຂອງສັດທີ່ສົ່ງອອກເພື່ອການຄ້າສັດລ້ຽງຕາມປົກກະຕິແລ້ວມັກຈະເປັນສັດທີ່ຍັງອ່ອນ ຫຼື ແຮກເກີດ. ໂດຍທົ່ວໄປແລ້ວ, ກຸ່ມຕົວຢ່າງເຫຼົ່ານີ້ບໍ່ໄດ້ຮັບການພັດທະນາທີ່ສຳຄັນໃນສະພາບແວດລ້ອມທີ່ມີການຄວບຄຸມກ່ອນທີ່ຈະສົ່ງອອກ ແລະ ນັ້ນກໍໝາຍຄວາມວ່າບໍ່ໄດ້ຖືກລ້ຽງໃນທົ່ງ. ເບິ່ງໄປໃນແງ່ກົງກັນຂ້າມ, ສັດ ແລະ ພືດທີ່ຖືກສົ່ງອອກການຄ້າປະເພດສັດທີ່ໃຫ້ຊີ້ນ ຫຼື ໜັງຕາມປົກກະຕິແມ່ນຕ້ອງການຈຳນວນມະຫາສານ ແລະ ນັ້ນກໍມັກຈະເປັນສັດທີ່ຖືກລ້ຽງມາໃນສະພາບແວດລ້ອມທີ່ໄດ້ມີການຄວບຄຸມເປັນໄລຍະເວລາທີ່ແກ່ຍາວອອກໄປ ເພື່ອໃຫ້ໄດ້ຂະໜາດຂອງຮ່າງກາຍຕາມທີ່ທ້ອງຕະຫຼາດກຳນົດ ຫຼື ຕ້ອງການ.

# 5.0 ການຊ່ວຍເຫຼືອເພີ່ມເຕີມຕໍ່ກັບການນຳໃຊ້ລະຫັດແຫຼ່ງກຳເນີດ C

1. When ເມື່ອມີການປະເມີນໃບຄຳຮ້ອງເພື່ອສົ່ງອອກກຸ່ມຕົວຢ່າງຂອງສັດ ແລະ ພືດທີ່ໄດ້ຈົດບັນຊີເຂົ້າໃນ CITES ສະເໜີໂດຍຜູ້ສະໝັກໃຫ້ມີການລ້ຽງແບບກັກຂັງ, ການປະຕິບັດຕາມການຄົ້ນຄວ້າ ແລະ ພິຈາລະນາຈະຊ່ວຍໃນການກວດສອບຄວາມຖືກຕ້ອງ ຫຼື ບໍ່ເປັນໄປຕາມຂໍ້ກຳນົດຂອງ CITES ສຳລັບການລ້ຽງ "ສັດແບບກັກຂັງ".

2. ການກຳນົດວ່າກຸ່ມຕົວຢ່າງຂອງສັດ ຫຼື ພືດທີ່ໄດ້ຖືກລ້ຽງແບບກັກຂັງໂດຍອີງໃສ່ນິຍາມໃນມະຕິຂອງກອງປະຊຸມເວລາທີ 10.16 (ສະບັບປັບປຸງ) ເພື່ອກຳນົດລະຫັດແຫຼ່ງກຳເນີດທີ່ຖືກຕ້ອງ, ມັນມີຄວາມຈຳເປັນຕ້ອງກຳນົດດັ່ງນີ້:
   i. ສັດ ແລະ ພືດຊະນິດໄດ້ກຳນົດໄວ້ເອກະສານຊ້ອນທ້າຍສະບັບໃດ ແລະ
   ii. ຈຸດປະສົງຂອງການສົ່ງອອກ (ກ່ຽວຂ້ອງກັບການຄ້າ ຫຼື ບໍ່ກ່ຽວຂ້ອງກັບການຄ້າ).

3. ຖ້າຫາກວ່າກຸ່ມຕົວຢ່າງນັ້ນແມ່ນເອກະສານຊ້ອນທ້າຍ I, ບັນດາສັດ ແລະ ພືດທີ່ຖືກລ້ຽງແບບກັກຂັງ ແລະ ການປະສົມພັນດັ່ງກ່າວແມ່ນເພື່ອຈຸດປະສົງທາງການຄ້າ, ໃຫ້ຂໍຄວາມເຫັນນຳເວັບໄຊທ໌ຂອງ CITES ເພື່ອກຳນົດວ່າກຸ່ມຕົວຢ່າງໃດທີ່ໄດ້ມາຈາກ ຫຼື ບໍ່ໄດ້ມາຈາກການດຳເນີນປະສົມພັນສັດ ທີ່ໄດ້ກຳນົດໄວ້ໃນການຈົດທະບຽນຂອງກອງເລຂາກ່ຽວກັບການດຳເນີນການປະສົມພັນສັດໄດ້ທີ່: http://www.cites.org/eng/common/reg/cb/summary.html.

4. ຖ້າຫາກບໍ່ມີຂໍ້ສົງໄສວ່າກຸ່ມຕົວຢ່າງນັ້ນໄດ້ມາຈາກການດຳເນີນການປະສົມພັນທີ່ໄດ້ຈົດທະບຽນຂອງ CITES, ແລ້ວໃຫ້ນຳໃຊ້ລະຫັດແຫຼ່ງກຳເນີດເປັນ D.

5. ຖ້າຫາກວ່າຍັງມີຂໍ້ສົງໄສຢູ່ ແລະ ຜູ້ໃຊ້ກໍບໍ່ສາມາດໃຫ້ຫຼັກຖານພຽງພໍ ເພື່ອພິສູດໃຫ້ເຫັນວ່າກຸ່ມຕົວຢ່າງນັ້ນມີຕົ້ນກຳເນີດມາຈາກການດຳເນີນຈົດທະບຽນຂອງ CITES, ບໍ່ໃຫ້ນຳໃຊ້ລະຫັດແຫຼ່ງກຳເນີດເປັນ D. ໃນກໍລະນີນີ້, ຈະຕ້ອງມີຄວາມຈຳເປັນກຳນົດເອົາກຸ່ມຕົວຢ່າງທີ່ໄດ້ຖືກລ້ຽງແບບກັກຂັງ ຫຼື ລ້ຽງບໍ່ໄດ້ກັກຂັງທີ່ແນ່ນອນ, ໄດ້ເກັບກ່ຽວເອົາມາຈາກສະພາບແວດລ້ອມຕາມທຳມະຊາດ ຫຼື ໄດ້ມາຈາກແຫຼ່ງກຳເນີດອື່ນໆ.

6. ຖ້າຫາກວ່າຍັງບໍ່ມີຫຼັກຖານຢືນຢັນວ່າກຸ່ມຕົວຢ່າງທີ່ຍັງເປັນຄຳຖາມຄ້າງຄາຢູ່ນັ້ນເປັນສັດລ້ຽງແບບກັກຂັງຕາມນິຍາມໃນມະຕິຂອງກອງປະຊຸມເວລາທີ 10.16 (ສະບັບປັບປຸງ), ແລ້ວຈະຕ້ອງປະຕິບັດຕາມຄຳເຕືອນ ແລະ ຄວນຈະມີການກວດສອບລາຍລະອຽດເພີ່ມເຕີມ.

7. ໃນກໍລະນີນີ້, ຂໍ້ມູນຕໍ່ກັບຄຳຖາມເຫຼົ່ານັ້ນຈະຊ່ວຍໃນການກຳນົດມັນແມ່ນການດຳເນີນການປະສົມພັນສັດ ຫຼື ບໍ່ແມ່ນ ໃຫ້ສອດຄ່ອງກັບນິຍາມຂອງ "ສັດລ້ຽງແບບກັກຂັງ" ໃນມະຕິຂອງກອງປະຊຸມເວລາທີ 10.16 (ສະບັບປັບປຸງ) ເຊິ່ງຈະຊ່ວຍໃຫ້ຄະນະກຳມະການຄຸ້ມຄອງສາມາດອອກແຈ້ງການຕັດສິນໃຈຖ້າຫາກຈະນຳໃຊ້ລະຫັດແຫຼ່ງກຳເນີດ C, F ຫຼື ຍົກເລີກການນຳໃຊ້ດັ່ງນີ້:
   i. ມີໃບອະນຸຍາດດຳເນີນກິດຈະການປະສົມພັນສັດແລ້ວບໍ່ທີ່ເປັນຄຳຖາມ? ຖ້າຍັງບໍ່ທັນມີໃບອະນຸຍາດດຳເນີນກິດຈະການເທື່ອ, ຄວາມຖືກຕ້ອງຕາມກົດໝາຍຂອງການສົ່ງອອກກໍຈະຕ້ອງໄດ້ຕັ້ງຄຳຖາມຂຶ້ນມາ.
   ii. ກິດຈະການດຳເນີນການປະສົມພັນສັດທີ່ຖືກອະນຸຍາດໃຫ້ດຳເນີນຄັ້ງທຳອິດແມ່ນວັນທີໃດ?
   iii. ມີໃບອະນຸຍາດຈັກສະບັບແລ້ວທີ່ອອກໃຫ້, ໄລຍະເວລາໃດ ເພື່ອເກັບກຳຂໍ້ມູນຂອງກຸ່ມຕົວຢ່າງຈາກສະພາບແວດລ້ອມຕາມທຳມະຊາດ ແລະ ມີສັດຈັກໂຕທີ່ໄດ້ເກັບກຳໄວ້ແລ້ວ

ເພື່ອກໍານົດເອົາຈໍານວນທັງໝົດທີ່ຈັບໄດ້?

iv. ຈໍານວນຂອງການຂະຫຍາຍພັນປະຈໍາປີມີເທົ່າໃດ ແລະ ໂດຍອີງໃສ່ຄໍາແນະນໍາທາງດ້ານວິທະຍາສາດທີ່ເປັນເອກະລາດກ່ຽວກັບລັກສະນະພິເສດທາງຊີວະວິທະຍາຂອງກຸ່ມຕົວຢ່າງ, ຈໍານວນຂອງສັດເຫຼົ່ານີ້ມີທາງເປັນໄປໄດ້ສໍາລັບກຸ່ມຕົວຢ່າງທີ່ກ່ຽວຂ້ອງບໍ່?

v. ຈໍານວນທັງໝົດຂອງສັດແຕ່ລະໂຕທີ່ເກັບໄວ້ເພື່ອດໍາເນີນການປະສົມພັນມີເທົ່າໃດ ແລະ ມີສັດໂຕໃຫຍ່ທີ່ເປັນໂຕຜູ້ ແລະ ໂຕແມ່ທີ່ເກັບໄວ້ໃນຄອກເປັນພໍ່ແມ່ຈັກໂຕ?

vi. ສະຖານທີ່ເຫຼົ່ານັ້ນໄດ້ຖືກສໍາຫຼວດໂດຍເຈົ້າໜ້າທີ່ຈາກຄະນະກໍາມະການຄຸ້ມຄອງທາງດ້ານວິທະຍາສາດແລ້ວ ແລະ ມີບົດລາຍງານຜົນຂອງການສໍາຫຼວດແລ້ວບໍ່?

8. ໃນກໍລະນີທີ່ມີຂໍ້ສົງໄສກ່ຽວກັບຄວາມຊັດເຈນຂອງລະຫັດແຫຼ່ງກໍາເນີດ, ຄະນະກໍາມະການຄຸ້ມຄອງຂອງປະເທດທີ່ນໍາເຂົ້າຄວນຈໍາຂໍຄໍາເຫັນນໍາອົງການວິທະຍາສາດຂອງປະເທດທີ່ນໍາເຂົ້າຖ້າມີຄວາມຈໍາເປັນ ເພື່ອກໍານົດເອົາບັນດາກຸ່ມຕົວຢ່າງທີ່ຖືກລ້ຽງແບບກັກຂັງທົ່ວໄປພາຍໃຕ້ຂອບເຂດສິດຂອງຄະນະກໍາມະການຄຸ້ມຄອງຂອງປະເທດທີ່ນໍາເຂົ້າ. ຖ້າຫາກວ່າຍັງມີຂໍ້ສົງໄສຄ້າງຄາຢູ່, ບັນຫາດັ່ງກ່າວຈະຕ້ອງໄດ້ນໍາສະເໜີຕໍ່ກອງເລຂາຂອງ CITES.

# 6.0 ນິຍາມທີ່ກ່ຽວຂ້ອງ

ນິຍາມເຫຼົ່ານີ້ໄດ້ມາຈາກເວັບໄຊທ໌ຂອງ CITES. ສໍາລັບຄໍາອະທິບາຍຂອງນິຍາມເພີ່ມເຕີມ ໃຫ້ເຂົ້າເບິ່ງການປະມວນຄໍາສັບຂອງ CITES ໄດ້ທີ່:

http://www.cites.org/eng/resources/terms/glossary.php

| | |
|---|---|
| **ພືດຂະຫຍາຍພັນທຽມ** | ໝາຍເຖິງກຸ່ມຕົວຢ່າງຂອງພືດທີ່ໄດ້:<br>• ຈະເລີນເຕີບໂຕພາຍໃຕ້ສະພາບແວດລ້ອມທີ່ມີການຄວບຄຸມ.<br>• ຈະເລີນເຕີບໂຕຈາກເມັດພັນ, ກິ່ງຊໍາ, ການແບ່ງຕົວ, ແພຈຸລັງເບັນດ້ານກະດັບ ຫຼື ແພຈຸລັງຂອງພືດຊະນິດອື່ນໆ, ຈຸລັງສືບພັນ ຫຼື ການແຜ່ກະຈາຍອື່ນໆທີ່ໄດ້ຖືກຍົກເວັ້ນຈາກຂໍ້ກໍານົດຂອງສົນທິສັນຍາ ຫຼື ໄດ້ມາຈາກການເກັບໄວ້ໃນສາງເພື່ອເຮັດພັນພໍ່ແມ່ພັນສັດ.<br>ຫຼື ການຈັດແບ່ງຂະຫຍາຍພັນໄມ້ເກດສະໜາ, ຈະເລີນເຕີບໂຕຈາກເມັດພັນ, ເບ້ຍ, ຕົ້ນໄມ່ອ່ອນ, ກິ່ງຊໍາ, ການຕໍ່ກິ່ງ, ການຄອບເອົາກິ່ງ, ການແບ່ງຕົວ, ແພຈຸລັງພືດ ຫຼື ແພຈຸລັງຂອງພືດຊະນິດອື່ນໆທີ່ໄດ້ມາຈາກການເກັບໄວ້ໃນສາງເພື່ອເຮັດພໍ່ແມ່ພັນສັດ ອີງຕາມນິຍາມຂອງ "ການເກັບໄວ້ໃນສາງເພື່ອເຮັດພໍ່ແມ່ພັນສັດ" ໃນມະຕິຂອງກອງປະຊຸມເລກທີ 11.11 (ສະບັບປັບປຸງສໍາເນົາເລກທີ 17). |
| **ສັດລ້ຽງທີ່ຖືກກັກຂັງ** | ໝາຍເຖິງສັດທີ່ເກີດ ຫຼື ຂະຫຍາຍພັນໃນສະພາບແວດລ້ອມທີ່ມີການຄວບຄຸມໃນກໍລະນີທີ່ວ່າ:<br>i) ສັດຜູ້ ຫຼື ແມ່ປະສົມພັນກັນ ຫຼື ຈຸລັງສືບພັນໄດ້ຖືກຖ່າຍທອດໄປເປັນສະພາບແວດລ້ອມທີ່ມີການຄວບຄຸມ (ຖ້າຫາກວ່າການແຜ່ພັນໃໝ່ມີການຮ່ວມເພດ) ຫຼື ສັດຜູ້ ຫຼື ແມ່ໄດ້ຢູ່ໃນສະພາບແວດລ້ອມທີ່ມີການຄວບຄຸມໃນເວລາທີ່ມີການຈະເລີນພັນເລີ່ມເກີດຂຶ້ນ (ຖ້າຫາກວ່າການແຜ່ພັນໃໝ່ບໍ່ມີການຮ່ວມເພດ).<br>ii) ສັດລ້ຽງປະສົມພັນຕໍ່ຄວາມເພິ່ງພໍໃຈຂອງສິດອໍານາດລັດຖະບານທີ່ມີຄວາມສາມາດຂອງປະເທດທີ່ນໍາເຂົ້າມີດັ່ງນີ້:<br>a) ໄດ້ຖືກກໍານົດຕາມຂໍ້ກໍານົດຂອງ CITIES ແລະ ບະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ໃນລັກສະນະທີ່ບໍ່ເປັນອັນຕະລາຍຕໍ່ການມີຊີວິດຢູ່ລອດຂອງສັດ ແລະ ພືດໃນສະພາບແວດລ້ອມຕາມທໍາມະຊາດ.<br>b) ໄດ້ຮັບການປົກປັກຮັກສາໂດຍບໍ່ຕ້ອງມີຄໍາແນະນໍາຂອງສັດຈາກສະພາບແວດລ້ອມຕາມທໍາມະຊາດ ຍົກເວັ້ນການເພີ່ມສັດເຂົ້າມາບາງໂອກາດເຊັ່ນວ່າ: ໄຂ່ ຫຼື ຈຸລັງສືບພັນ ອີງຕາມຂໍ້ກໍານົດຂອງ CITIES ແລະ ລະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ໃນລັກສະນະທີ່ບໍ່ເປັນອັນຕະລາຍຕໍ່ການມີຊີວິດຢູ່ລອດຂອງສັດ ແລະ ພືດໃນສະພາບແວດລ້ອມຕາມທໍາມະຊາດ ເຊິ່ງໄດ້ຮັບການຊີ້ນໍາຈາກອົງການວິທະຍາສາດດັ່ງນີ້:<br>1) ເພື່ອປ້ອງກັນ ຫຼື ກໍາຈັດການປະສົມພັນລະຫວ່າງພັນທີ່ໃກ້ຊິດກັນທີ່ເປັນໄພຕໍ່ສຸຂະພາບ ດ້ວຍຂະໜາດຂອງການເພີ່ມດັ່ງກ່າວທີ່ໄດ້ກໍານົດຕາມຄວາມຕ້ອງການສໍາລັບວັດຖຸພັນທຸກໍາໃໝ່.<br>2) ເພື່ອຈັດວາງສັດຈໍາພວກທີ່ຖືກຍຶດຕາມມະຕິຂອງກອງປະຊຸມເລກທີ 17.8 ຫຼື<br>3) ຍົກເວັ້ນເພື່ອນໍາໃຊ້ສໍາລັບສັດລ້ຽງທີ່ມີການປະສົມພັນ ແລະ<br>c)<br>1. ໄດ້ຂະຫຍາຍພັນເປັນລຸ້ນທີສອງ (F2) ຫຼື ລຸ້ນຖັດໄປ (F3, F4 ແລະ ຕໍ່ໄປ) ໃນສະພາບແວດລ້ອມທີ່ມີການຄວບຄຸມ. ຫຼື<br>2. ໄດ້ມີການຄຸ້ມຄອງໃນລັກສະນະທີ່ວ່າໄດ້ສາທິດໃຫ້ເຫັນເຖິງຄວາມສາມາດຂອງການຂະຫຍາຍພັນຂອງລຸ້ນທີສອງໄດ້ຢ່າງໜ້າເຊື່ອຖືໃນສະພາບແວດລ້ອມທີ່ມີການຄວບຄຸມ. |
| **ສັດລ້ຽງທີ່ມີການປະສົມພັນ** | ໝາຍເຖິງກຸ່ມສັດທີ່ນໍາໃຊ້ເພື່ອການແຜ່ພັນໃນການດໍາເນີນການປະສົມພັນແບບກັກຂັງ. |
| **ສັດ ຫຼື ພືດໃນສະພາບແວດລ້ອມທີ່ມີການຄວບຄຸມ** | ສໍາລັບສັດ: ສະພາບແວດລ້ອມທີ່ຖືກຄວບຄຸມສໍາລັບຈຸດປະສົງຂອງການຂະຫຍາຍພັນສັດ ແລະ ພືດຈໍາເພາະທີ່ມີຊາຍແດນກໍານົດໄວ້ ເພື່ອປ້ອງກັນສັດ, ໄຂ່ ຫຼື ຈຸລັງສືບພັນຂອງສັດ ແລະ ພືດດັ່ງກ່າວຈາກການນໍາເຂົ້າມາ ຫຼື ເອົາອອກໄປ ແລະ ຈຸດພິເສດລັກສະນະທົ່ວໄປ ເຊິ່ງອາດຈະລວມຢູ່ນໍາ ແຕ່ບໍ່ມີຂອບເຂດຈໍາກັດເຊັ່ນວ່າ: ບ່ອນຢູ່ອາໄສທຽມ, ການກໍາຈັດສິ່ງເສດເຫຼືອ, ການເບິ່ງແຍງສຸຂະພາບ, ການປ້ອງກັນຈາກສັດທີ່ກິນສັດອື່ນເປັນອາຫານ ແລະ ສະໜອງອາຫານທຽມ. ສໍາລັບພືດ:<br>ສະພາບແວດລ້ອມທີ່ບໍ່ແມ່ນທໍາມະຊາດທີ່ມີການຄວບຄຸມຢ່າງລະອຽດໂດຍກາຍເຂົ້າໄປແຊກແຊງຂອງມະນຸດເພື່ອຈຸດປະສົງຜະລິດພືດພັນ. ຈຸດພິເສດລັກສະນະທົ່ວໄປຂອງສະພາບແວດລ້ອມທີ່ມີການຄວບຄຸມອາດຈະລວມມີ |

| | |
|---|---|
| | ແຕ່ມີຂອບເຂດຈຳກັດ ເພື່ອການໄຖດິນ, ການປະສົມພັນ, ເສຍຫຍ້າ ແລະ ການຄວບຄຸມສັດຕູພືດ, ຊີນລະປະທານ ຫຼື ກິດຈະການກ້າເບ້ຍໄມ້ເຊັ່ນວ່າ: ການເອົາໃສ່ໂຖ, ຫຍ້າຮອງ ຫຼື ໜານ ຫຼື ການປ້ອງກັນຈາກອາກາດ. |
| **ພືດທີ່ເກັບໄວ້ເຮັດແນວພັນ** | ກຸ່ມພືດທີ່ປູກພາຍໃຕ້ສະພາບແວດລ້ອມທີ່ມີການຄວບຄຸມ ເພື່ອນຳໃຊ້ເຂົ້າໃນການຜະລິດພັນໃໝ່ ແລະ ຕ້ອງເປັນໄປຕາມຄວາມພໍໃຈຂອງຄະນະກຳມະການຄຸ້ມຄອງຂອງ CITES ທີ່ກຳນົດໄວ້ຂອງປະເທດທີ່ສົ່ງອອກດັ່ງນີ້:<br>• ໄດ້ກຳນົດໂດຍອີງຕາມຂໍ້ກຳນົດຂອງ CITES ແລະ ລະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ໃນລັກສະນະທີ່ບໍ່ເປັນອັນຕະລາຍຕໍ່ການມີຊີວິດຢູ່ລອດຂອງສັດ ແລະ ພືດໃນສະພາບແວດລ້ອມຕາມທຳມະຊາດ ແລະ<br>ຕ້ອງໄດ້ເກັບຮັກສາໄວ້ໃນປະລິມານທີ່ພຽງພໍສຳລັບການຂະຫຍາຍພັນ ເພື່ອເຮັດໃຫ້ຄວາມຈຳເປັນຫຼຸດລົງ ຫຼື ຕັດອອກໃນການເພີ່ມພູນໃນສະພາບແວດລ້ອມຕາມທຳມະຊາດ<br>ດ້ວຍການຂະຫຍາຍພັນດຫ່ງກ່າວເກີດຂຶ້ນພຽງແຕ່ເປັນຂໍ້ຍົກເວັ້ນ ແລະ ມີຂອບເຂດຈຳກັດຕໍ່ປະລິມານທີ່ຈຳເປັນ ເພື່ອເກັບຮັກສາຄວາມແຂງແຮງ ແລະ ອັດຕາການຜະລິດຂອງພັນທີ່ເກັບມ້ຽນໄວ້. |

## 7.0 ຄຳແນະນຳເພີ່ມເຕີມ

**ຄຳແນະນຳກ່ຽວກັບໃບອະນຸຍາດ ແລະ ໃບຢັ້ງຢືນ ເຂົ້າເບິ່ງໄດ້ທີ່:**
http://www.cites.org/eng/disc/text.php#VI

**ຄຳແນະນຳກ່ຽວກັບຂໍ້ຍົກເວັ້ນ ແລະ ຂໍ້ກຳນົດພິເສດອື່ນໆທີ່ກ່ຽວຂ້ອງກັບການຄ້າ ເຂົ້າເບິ່ງໄດ້ທີ່:**

http://www.cites.org/eng/disc/text.php#VII

**ຄຳແນະນຳກ່ຽວກັບມະຕິຂອງກອງປະຊຸມເລກທີ 12.3 (ສະບັບປັບປຸງສຳເນົາເລກທີ 17) - ໃບອະນຸຍາດ ແລະ ໃບຢັ້ງຢືນ ເຂົ້າເບິ່ງໄດ້ທີ່:**

https://cites.org/sites/default/files/document/E-Res-12-03-R17.pdf

ເອກະສານຊ້ອນທ້າຍ

# ແຜນວາດໃນຮູບແບບສອບຖາມ

1. ມີສັດ ແລະ ພືດທີ່ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ (I, II or III) ຂອງ CITES ບໍ່?

ມີ……………………………………………………………………………………………ຕໍ່ຄຳຖາມຂໍ້ທີ 2

ບໍ່ມີ………………………………………………………………ບໍ່ຈຳເປັນຕ້ອງມີໃບອະນຸຍາດສົ່ງອອກຂອງ **CITES**

2. ແມ່ນກຸ່ມຕົວຢ່າງທີ່ໄດ້ມາກ່ອນຂໍ້ກຳນົດຂອງສົນທິສັນຍາມີບັງຄັບໃຊ້ ຫຼື ບໍ່?

ແມ່ນແລ້ວ……………………………………………………………………………………ລະຫັດແຫຼ່ງກຳເນີດ **O**

ບໍ່ແມ່ນ…………………………………………………………………………………………ຕໍ່ຄຳຖາມຂໍ້ທີ 3

3. ແມ່ນສັດທີ່ຖືກຍຶດ ຫຼື ຄອບຄອງບໍ່? ເລື່ອງການສົ່ງອອກໃຫ້ແທດເໝາະກັບມະຕິຂອງກອງປະຊຸມເວາທີ 17.8

ແມ່ນແລ້ວ.......................................................................................ລະຫັດແຫຼ່ງກຳເນີດ I

ບໍ່ແມ່ນ.............................................................................................ຕໍ່ຄຳຖາມຂໍ້ທີ 4

4. ມີຂໍ້ມູນພຽງພໍກ່ຽວກັບກຸ່ມຕົວຢ່າງ ເພື່ອກຳນົດແຫຼ່ງກຳເນີດຂອງມັນບໍ່?

ມີ.....................................................................................................ຕໍ່ຄຳຖາມຂໍ້ທີ 5

ບໍ່ມີ...................................................................................................ລະຫັດແຫຼ່ງກຳເນີດ U

5. ແມ່ນກຸ່ມຕົວຢ່າງນັ້ນໄດ້ມາຈາກສະພາບແວດລ້ອມທາງທະເລ ແລະ ບໍ່ຢູ່ພາຍໃຕ້ຂອບເຂດສິດອຳນາດຂອງລັດໃດ ຫຼື ບໍ່?

ແມ່ນແລ້ວ.......................................................................................ລະຫັດແຫຼ່ງກຳເນີດ X

ບໍ່ແມ່ນ.............................................................................................ຕໍ່ຖຳຖາມຂໍ້ທີ 6

6. ກຸ່ມຕົວຢ່າງນັ້ນເປັນພືດ ຫຼື ສັດ?

ເປັນສັດ...........................................................................................ຕໍ່ຄຳຖາມຂໍ້ທີ 7

ເປັນພືດ...........................................................................................ຕໍ່ຄຳຖາມຂໍ້ທີ 21

7. ກຸ່ມຕົວຢ່າງນັ້ນໄດ້ມາຈາກສະພາບແວດລ້ອມຕາມທຳມະຊາດບໍ່?

ແມ່ນແລ້ວ.......................................................................................ຕໍ່ຄຳຖາມຂໍ້ທີ 8

ບໍ່ແມ່ນ.............................................................................................ຕໍ່ຄຳຖາມຂໍ້ທີ 13

8. ກຸ່ມຕົວຢ່າງນັ້ນໄດ້ມາຈາກສະພາບແວດລ້ອມຕາມທຳມະຊາດບໍ່ເຊັ່ນວ່າ: ໄຂ່ ຫຼື ລູກອ່ອນທີ່ມີໂອກາດມີຊີວິດຢູ່ລອດເປັນສັດໃຫຍ່ໄດ້ໜ້ອຍຫຼາຍ?

ແມ່ນແລ້ວ.....................................................................................................ຕໍ່ຄຳຖາມຂໍ້ທີ 9

ບໍ່ແມ່ນ...............................................................................................ລະຫັດແຫຼ່ງກຳເນີດ W

9. ກຸ່ມຕົວຢ່າງນັ້ນໄດ້ຖືກລ້ຽງໃນສະພາບແວດລ້ອມທີ່ມີການຄວບຄຸມບໍ່?

ແມ່ນແລ້ວ.................................................................................................ຕໍ່ຄຳຖາມຂໍ້ທີ 10

ບໍ່ແມ່ນ\...........................................................................................ລະຫັດແຫຼ່ງກຳເນີດ W

10. ກຸ່ມຕົວຢ່າງນັ້ນໄດ້ຖືກໂອນເຂົ້າເອກະສານຊ້ອນທ້າຍ II ແລະ ກຳນົດໄວ້ຕາມມະຕິຂອງກອງປະຊຸມເລກທີ 11.16 (ສະບັບປັບປຸງສຳເນົາເລກທີ 15) ບໍ່?

ແມ່ນແລ້ວ.............................................................................................ລະຫັດແຫຼ່ງກຳເນີດ R

ບໍ່ແມ່ນ.............................................................................................ຕໍ່ຄຳຖາມຂໍ້ທີ 11

11. ກຸ່ມຕົວຢ່າງໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ II ຫຼື III ຂອງ CITES ແລ້ວບໍ່?

ແມ່ນແລ້ວ.................................................................................ລະຫັດແຫຼ່ງກຳເນີດ R

ບໍ່ແມ່ນ.....................................................................................ຕໍ່ຄຳຖາມຂໍ້ທີ 12

12. ກຸ່ມຕົວຢ່າງສອດຄ່ອງກັບຂໍ້ກຳນົດຕ່າງໆພາຍໃຕ້ມາດຕາ III ຂອງສົນທິສັນຍາແລ້ວບໍ່?

ສອດຄ່ອງແລ້ວ..........................................................................ລະຫັດແຫຼ່ງກຳເນີດ W

ຍັງບໍ່ທັນສອດຄ່ອງ...............................................................................ບໍ່ຄວນດຳເນີນການສົ່ງອອກ

13. ກຸ່ມຕົວຢ່າງນັ້ນໄດ້ມາຈາກໂຕຜູ້ ຫຼື ແມ່ທີ່ປະສົມພັນບໍ່ ຫຼື ຖ່າຍໂອນຈຸລັງສືບພັນໃນສະພາບແວດລ້ອມທີ່ມີການຄວບຄຸມ (ການສືບພັນແບບຮ່ວມເພດ) ຫຼື ໂຕຜູ້ ຫຼື ແມ່ຢູ່ໃນສະພາບແວດລ້ອມທີ່ມີການຄວບຄຸມໃນເວລາທີ່ມີການຈະເລີນພັນເລີ່ມຂຶ້ນ (ການສືບພັນແບບບໍ່ຮ່ວມເພດ)?

ແມ່ນແລ້ວ......................................................................................................ຕໍ່ຄຳຖາມຂໍ້ທີ 15

ບໍ່ແມ່ນ..........................................................................................................ຕໍ່ຄຳຖາມຂໍ້ທີ 14

14. ກຸ່ມຕົວຢ່າງເກີດໃນສະພາບແວດລ້ອມແບບກັກຂັງບໍ່ ຫຼື ສະພາບແວດລ້ອມທີ່ມີການຄວບຄຸມ?

ແມ່ນແລ້ວ......................................................................................................ລະຫັດແຫຼ່ງກຳເນີດ F

ບໍ່ແມ່ນ..........................................................................................................ລະຫັດແຫຼ່ງກຳເນີດ W

15. ສັດລ້ຽງທີ່ມີການປະສົມພັນໄດ້ກຳນົດໄວ້ຕາມຂໍ້ກຳນົດຂອງ CITES ແລະ ລະບຽບກົດໝາຍຂອງປະເທດທີ່ກ່ຽວແລ້ວບໍ່ ແລະ ໃນລັກສະນະທີ່ບໍ່ທຳລາຍການມີຊີວິດຢູ່ລອດຂອງສັດ ແລະ ພືດໃນສະພາບແວດລ້ອມຕາມທຳມະຊາດ?

ແມ່ນແລ້ວ......................................................................................................ຕໍ່ຄຳຖາມຂໍ້ທີ 16

ບໍ່ແມ່ນ..........................................................................................................ລະຫັດແຫຼ່ງກຳເນີດ F

16. ສັດລ້ຽງທີ່ມີການປະສົມພັນໄດ້ຖືກເກັບຮັກສາໂດຍບໍ່ມີຄຳແນະນຳຂອງກຸ່ມຕົວຢ່າງເລີຍຈາກສະພາບແວດລ້ອມຕາມທຳມະຊາດບໍ່, ຍົກເວັ້ນການເພີ່ມສັດ, ໄຂ່ ຫຼື ຈຸລັງສືບພັນເຂົ້າມາບາງໂອກາດ ຕາມຂໍ້ກຳນົດຂອງ CITES ແລະ ລະບຽບກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ໃນລັກສະນະທີ່ບໍ່ທຳລາຍການມີຊີວິດຢູ່ລອດຂອງສັດ ແລະ ພືດໃນສະພາບແວດລ້ອມຕາມທຳມະຊາດ?

ແມ່ນແລ້ວ......................................................................................................ຕໍ່ຄຳຖາມຂໍ້ທີ 17

ບໍ່ແມ່ນ..........................................................................................................ລະຫັດແຫຼ່ງກຳເນີດ F

17. ສັດລ້ຽງທີ່ມີການປະສົມພັນໄດ້ຂະຫຍາຍພັນລຸ້ນທີສອງ (F2) ຫຼື ລຸ້ນຖັດຕໍ່ຈາກນັ້ນ (F3, F4 ແລະ ອື່ນໆ) ຢູ່ໃນສະພາບແວດລ້ອມທີ່ມີການຄວບຄຸມບໍ່ ຫຼື ໄດ້ຮັບການຄຸ້ມຄອງໃນລັກສະນະທີ່ມີການສາທິດໃຫ້ເຫັນເຖິງຄວາມສາມາດຂອງການຂະຫຍາຍພັນຂອງລຸ້ນທີສອງໄດ້ຢ່າງໜ້າເຊື່ອຖືໃນສະພາບແວດລ້ອມທີ່ມີການຄວບຄຸມ?

ແມ່ນແລ້ວ, ກຸ່ມຕົວຢ່າງທີ່ຖືກລ້ຽງແບບກັກຂັງ........................................................ຕໍ່ຄຳຖາມຂໍ້ທີ 18

ບໍ່ແມ່ນ..........................................................................................................ລະຫັດແຫຼ່ງກຳເນີດ F

18. ກຸ່ມຕົວຢ່າງຂອງ CITES ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບໃດ?

ເອກະສານຊ້ອນທ້າຍ I..........................................................................................ຕໍ່ຄຳຖາມຂໍ້ທີ 19

ເອກະສານຊ້ອນທ້າຍທີ II ຫຼື III....................................................................ລະຫັດແຫຼ່ງກຳເນີດ C

19. ກຸ່ມຕົວຢ່າງນັ້ນໄດ້ຖືກລ້ຽງເພື່ອຈຸດປະສົງທາງການຄ້າບໍ່?

ແມ່ນແລ້ວ.............................................................................................................ຕໍ່ຄຳຖາມຂໍ້ທີ 20

ບໍ່ແມ່ນ..............................................................................................................ລະຫັດແຫຼ່ງກຳເນີດ C

20. ກຸ່ມຕົວຢ່າງໄດ້ຖືກລ້ຽງຢູ່ທີ່ການດຳເນີນການປະສົມພັນທີ່ໄດ້ຮັບການຈົດທະບຽນຂອງ CITES ບໍ່?

ແມ່ນແລ້ວ.................................................................................................................ແຫຼ່ງກຳເນີດ D

ບໍ່ແມ່ນ.........................................................................................ບໍ່ຄວນດຳເນີນການສົ່ງອອກ

21. ກຸ່ມຕົວຢ່າງຈະເລີນເຕີບໂຕພາຍໃຕ້ສະພາບທີ່ມີການຄວບຄຸມບໍ່?

ແມ່ນແລ້ວ.............................................................................................................ຕໍ່ຄຳຖາມຂໍ້ທີ 21

ບໍ່ແມ່ນ..............................................................................................................ລະຫັດແຫຼ່ງກຳເນີດ W

22. ກຸ່ມຕົວຢ່າງໄດ້ຈະເລີນເຕີບໂຕມາຈາກເມັດພັນ, ກິ່ງຊຳ, ການແບ່ງຕົວ, ແພຈຸລັງດ້ານເປັນກະດັບ ຫຼື ແພຈຸລັງຂອງພືດຊະນິດອື່ນໆ, ຈຸລັງສືບພັນ ຫຼື ການແຜ່ກະຈາຍທີ່ໄດ້ມາຈາກສັດລ້ຽງທີ່ເກັບໄວ້ເປັນພໍ່ແມ່ພັນ ຕາມການຈັດແບ່ງໃນຂໍ້ 1b) ຂອງມະຕິກອງປະຊຸມເລກທີ 11.11 (ສະບັບປັບປຸງສຳເນົາເລກທີ 17) ແມ່ນບໍ່?*

ແມ່ນແລ້ວ.............................................................................................................ຕໍ່ຄຳຖາມຂໍ້ທີ 26

ບໍ່ແມ່ນ.............................................................................................................ຕໍ່ຄຳຖາມຂໍ້ທີ 23

23. ກຸ່ມຕົວຢ່າງຈະເລີນເຕີບໂຕມາຈາກສະພາບແວດລ້ອມຕາມທຳມະຊາດທີ່ເປັນເມັດພັນ ຫຼື ຈຸລັງສືບພັນ ຕາມຂໍ້ຍົກເວັ້ນໃນມະຕິຂອງກອງປະຊຸມເລກທີ 11.11 (ສະບັບປັບປຸງສຳເນົາເລກທີ 17) ແມ່ນບໍ່?

ແມ່ນແລ້ວ.............................................................................................................ຕໍ່ຄຳຖາມຂໍ້ທີ 26

ບໍ່ແມ່ນ........................................................................................................ຕໍ່ຄຳຖາມຂໍ້ທີ **24**

24. ກຸ່ມຕົວຢ່າງຈະເລີນເຕີບໂຕມາຈາກກິ່ງງ່າ ຫຼື ການແບ່ງຕົວບໍ່?

ແມ່ນແລ້ວ........................................................................................................ຕໍ່ຄຳຖາມຂໍ້ທີ **25**

ບໍ່ແມ່ນ.....................................................................................................ລະຫັດແຫຼ່ງກຳເນີດ **W**

25. ກິ່ງງ່າ ຫຼື ການແບ່ງຕົວໄດ້ມາຈາກພືດໃນສະພາບແວດລ້ອມຕາມທຳມະຊາດທີ່ບໍ່ໄດ້ຮັບການຄົ້ນຄວ້າພິຈາລະນາເປັນພືດທີ່ເກັບໄວ້ເຮັດແນວພັນເທື່ອແມ່ນບໍ່?

ແມ່ນແລ້ວ.................................................................................................ລະຫັດແຫຼ່ງກຳເນີດ **W**

ບໍ່ແມ່ນ........................................................................................................ຕໍ່ຄຳຖາມຂໍ້ທີ **26**

26. ຕົວຢ່າງຂອງ CITES ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສະບັບໃດ?

ເອກະສານຊ້ອນທ້າຍ I..........................................................................................ຕໍ່ຄຳຖາມຂໍ້ທີ **27**

ເອກະສານຊ້ອນທ້າຍ II ຫຼື III..............................................................................ລະຫັດແຫຼ່ງກຳເນີດ **A**

27. ກຸ່ມຕົວຢ່າງໄດ້ຖືກປູກຂຶ້ນມາເພື່ອຈຸດປະສົງທາງການຄ້າບໍ່?

ແມ່ນແລ້ວ........................................................................................................ຕໍ່ຄຳຖາມຂໍ້ທີ **28**

ບໍ່ແມ່ນ.....................................................................................................ລະຫັດແຫຼ່ງກຳເນີດ **A**

28. ກຸ່ມຕົວຢ່າງໄດ້ຖືກຂະຫຍາຍພັນທຽມຢູ່ສວນກ້າເບ້ຍໄມ້ທີ່ໄດ້ຮັບການຈົດທະບຽນຂອງ CITES ບໍ່?

ແມ່ນແລ້ວ.................................................................................................ລະຫັດແຫຼ່ງກຳເນີດ **D**

ບໍ່ແມ່ນ.....................................................................................................ລະຫັດແຫຼ່ງກຳເນີດ **A**

* ພືດທີ່ຕໍ່ກິ່ງມາໄດ້ຖືກຮັບຮອງເປັນພຽງຂະຫຍາຍພັນທຽງເທົ່ານັ້ນໃນເວລາທີ່ຮາກ ແລະ ກິ່ງຂອງມັນແມ່ນໄດ້ມາຈາກກຸ່ມຕົວຢ່າງທີ່ໄດ້ຂະຫຍາຍພັນທຽມ.